ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

# ບົດລາຍງານປະຈຳປີ

# 2020



ທສວ

ກອງທຶນສົ່ງເສີມ ວນກ

SME Promotion Fund

ຖະໜົນໜອງບອນ, ບ້ານຝາຍ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ

ຕູ້ ປ.ນ 474; ເບີໂທ: (+856) 21 414604; ແຟກ: (+856) 21 410005; Website: www.dosmep.org

ພິມທີ່: ໂຮງພິມແຫ່ງລັດ

ພິມຄັ້ງທີ I

ຈຳນວນ 300 ຫົວ

# ຄຳນຳ

ຕາງໜ້າ ສະພາບໍລິຫານ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ຂ້າພະເຈົ້າ ມີຄວາມຍິນດີ ນຳສະເໜີບົດລາຍງານ ປະຈຳປີ 2020 ຂອງ ທສວ ໃຫ້ບັນດາທ່ານ. ທສວ ແມ່ນກອງທຶນຂອງລັດ ທີ່ຂຶ້ນກັບ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບການສ້າງຕັ້ງຢ່າງເປັນທາງການໃນປີ 2010 ແລະ ສືບຕໍ່ຜັນຂະຫຍາຍນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ວນກ) ເຂົ້າເຖິງແຫລ່ງທຶນ ທີ່ກຳນົດໃນແຜນພັດທະນາ ວນກ ສະບັບທີ 2 ເປັນຕົ້ນມາ ຈົນເຖິງປັດຈຸບັນ. ປີ 2020 ໄດ້ສ້າງຂີດໝາຍອັນສຳຄັນ ໃນການຍົກລະດັບບົດບາດຂອງ ທສວ ເປັນເຄື່ອງມືດັດສົມການສະໜອງສິນເຊື່ອໃຫ້ ວນກ ຕາມນະໂຍບາຍຂອງລັດຖະບານ ໂດຍການປະກອບທຶນຈາກງົບປະມານຂອງລັດຄັ້ງທຳອິດ ຈຳນວນ 200 ຕື້ກີບ ໃຫ້ ທສວ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ວນກ ຂອງລັດຖະບານໃຫ້ປະກົດຜົນເປັນຈິງ. ປີ 2020 ແມ່ນປີທີ່ເກີດວິກິດຈາກສະພາບການແຜ່ລະບາດຂອງພະຍາດໂຄວິດ-19. ວິກິດດັ່ງກ່າວໄດ້ສົ່ງຜົນໃຫ້ເສດຖະກິດໂລກມີການປ່ຽນແປງອັນສຳຄັນ ແລະ ຖົດຖອຍຢ່າງໜັກ ສົ່ງຜົນກະທົບຕໍ່ ສປປ ລາວ ເຮັດໃຫ້ GDP ຕໍ່ຫົວຄົນໃນປີ 2020 ຫລຸດຄາດໝາຍ 10,55%, ອັດຕາການເຕີບໂຕທາງດ້ານເສດຖະກິດຫລຸດລົງ 0,6% (Lao PDR Economic Monitor, 2021). ສະພາບການແຜ່ລະບາດ, ມາດຕະການໄລຍະຫ່າງ ແລະ ມາດຕະການປ້ອງກັນອື່ນໆ ສົ່ງຜົນໃຫ້ກິດຈະກຳປະຈຳວັນຂອງປະຊາຊົນມີການປ່ຽນແປງໄປ ຊຶ່ງສົ່ງຜົນທາງລົບ ຕໍ່ກັບຜູ້ປະກອບກິດຈະການ ຍ້ອນຕ່ອງໂສ້ເບື້ອງຄວາມຕ້ອງການ ແລະ ການສະໜອງຖືກຢຸດສະງັກພ້ອມກັນ. ທຸລະກິດມີການຢຸດສະງັກ ທັງການນຳເຂົ້າ ແລະ ການສົ່ງອອກ, ປະຊາຊົນບໍ່ມີການໃຊ້ຈ່າຍ ຫລື ຄວາມສາມາດໃຊ້ຈ່າຍມີໜ້ອຍລົງ, ຫົວໜ່ວຍວິສາຫະກິດຂາດສະພາບຄ່ອງທາງດ້ານການເງິນ ແລະ ບາງລາຍກໍຍຸບເລີກກິດຈະການ. ວນກ ຍິ່ງມີຄວາມບອບບາງເປັນພິເສດ ໂດຍສະເພາະ ຂະແໜງບໍລິການທີ່ເຂັ້ມງານ ແລະ ຂະແໜງທີ່ເຊື່ອມໂຍງກັບຕ່ອງໂສ້ມູນຄ່າເພີ່ມຂອງພາກພື້ນ ແລະ ສາກົນ ກໍຄືຂະແໜງທ່ອງທ່ຽວ ແລະ ຂະແໜງການປິ່ນອ້ອມການທ່ອງທ່ຽວ, ການຄ້າຂາຍຍົກ ແລະ ຂາຍຍ່ອຍ, ແລະ ອຸດສາຫະກຳປຸງແຕ່ງ.

ທ່າມກາງສະພາບເສດຖະກິດດັ່ງກ່າວ ທສວ ໄດ້ຈັດຕັ້ງນະໂຍບາຍການປ່ອຍສິນເຊື່ອບ້ວງເງິນ 200 ຕື້ກີບ ໃຫ້ ວນກ ທີ່ນອນໃນຂົງເຂດການຜະລິດເປັນສິນຄ້າ ຜ່ານທະນາຄານທຸລະກິດ ໃນອັດຕາດອກເບ້ຍທີ່ຕ່ຳທີ່ສຸດ ແລະ ໄລຍະເວລາກູ້ຢືມທີ່ຍາວກວ່າປົກກະຕິ ເພື່ອເປັນການປະກອບສ່ວນຈັດຕັ້ງນະໂຍບາຍກະຕຸ້ນເສດຖະກິດ ແລະ ສົ່ງເສີມ ວນກ ຂອງລັດຖະບານ ຊຶ່ງສາມາດປ່ອຍສິນເຊື່ອໃຫ້ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນ 14 ແຂວງທົ່ວປະເທດ ໄດ້ເກືອບ 100 ຫົວໜ່ວຍ. ນອກຈາກນັ້ນ ທສວ ຍັງສືບຕໍ່ຕິດຕາມຊຸກຍູ້ບັນດາທະນາຄານທຸລະກິດທີ່ເປັນຄູ່ຮ່ວມມືຂອງ ທສວ ໃນການປ່ອຍສິນເຊື່ອບ້ວງອື່ນໆຂອງ ທສວ ຄື: ບ້ວງ 32 ຕື້ກີບ, ບ້ວງໂຄງການສົ່ງເສີມ ວນກ ເຂົ້າຫາແຫລ່ງທຶນ ແລະ ບ້ວງເງິນສະສົມຂອງ ທສວ. ຄຽງຄູ່ກັນນັ້ນ ທສວ ໄດ້ອອກຜະລິດຕະພັນສິນເຊື່ອໃໝ່ ໂດຍການປະກອບທຶນໃຫ້ 04 ສະຖາບັນການເງິນຈຸນລະພາກ ຢູ່ນະຄອນຫລວງວຽງຈັນ ເພື່ອປ່ອຍສິນເຊື່ອໃຫ້ ຈຸນລະວິສາຫະກິດ (ທັງຂຶ້ນ ແລະ ບໍ່ຂຶ້ນທະບຽນວິສາຫະກິດ) ແລະ ກຸ່ມຜູ້ຜະລິດ ໃນອັດຕາດອກເບ້ຍບໍ່ເກີນ 1% ຕໍ່ເດືອນ. ເຊັ່ນດຽວກັນ ທສວ ກໍໄດ້ສະໜອງທຶນໃຫ້ກອງທຶນນາງຟ້າ (ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ) ເພື່ອນຳໄປຄ້ຳປະກັນສິນເຊື່ອໃຫ້ກຸ່ມຜູ້ຜະລິດກະສິກຳ. ໃນປີ 2020 ບ້ວງເງິນຂອງ ທສວ ສາມາດປ່ອຍສິນເຊື່ອໃຫ້ ວນກ ທັງໝົດ 138 ຫົວໜ່ວຍ 160 ສັນຍາ ມູນຄ່າ 164,54 ຕື້ກີບ, ນັບແຕ່ປີ 2012-2020 ມີການປ່ອຍກູ້ໃຫ້ ວນກ ທັງໝົດ 414 ຫົວໜ່ວຍ, 581 ສັນຍາ ມູນຄ່າ 356,042 ຕື້ກີບ. ນອກຈາກ ການປ່ອຍສິນເຊື່ອແລ້ວ ທສວ ຍັງສະໜອງທຶນສະໜັບສະໜູນໂຄງການສົ່ງເສີມວິຊາການ ທີ່ສອດຄ່ອງກັບ 13 ກິດຈະກຳສົ່ງເສີມ ວນກ ກຳນົດໃນກົດໝາຍສົ່ງເສີມ ວນກ ໂດຍນຳໃຊ້ເງິນສະສົມຈາກລາຍຮັບດອກເບ້ຍນັບແຕ່ປີ 2012 ເປັນຕົ້ນມາ. ສະເພາະປີ 2020 ທສວ ສະໜອງທຶນສະໜັບສະໜູນໂຄງການວິຊາການຈຳນວນ 09 ໂຄງການ ມູນຄ່າ 460 ລ້ານກີບ, ນັບແຕ່ປີ 2012-2020 ທສວ ສະໜອງທຶນໃຫ້ 60 ໂຄງການ ມູນຄ່າ 3,4 ຕື້ກີບ.

ໃນບາງຜົນງານທີ່ຍາດມາໄດ້ນັ້ນ ສິ່ງສຳຄັນກໍຍ້ອນໄດ້ຮັບການສະໜັບສະໜູນ ແລະ ຊີ້ນຳ ຢ່າງໃກ້ຊິດ ຈາກການນຳພັກ-ລັດ ແຕ່ລະຂັ້ນ. ພ້ອມກັນນັ້ນ ທສວ ກໍໄດ້ຮັບການຮ່ວມມືເປັນຢ່າງດີ ຈາກທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ເພື່ອສາມາດຈັດຕັ້ງຜັນຂະຫຍາຍດຳລັດ 299/ລບ ໃຫ້ປາກົດຜົນປັນຈິງເທື່ອລະກ້າວ. ພິເສດ ບັນດາທະນາຄານທຸລະກິດທີ່ເປັນຄູ່ຮ່ວມມືກັບ ທສວ ໄດ້ມີຄວາມຕັ້ງໜ້າ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດສັນຍາ ແລະ ນິຕິກຳທີ່ກ່ຽວຂ້ອງຂອງ ທສວ ກໍຄື ການຜັນຂະຫຍາຍນະໂຍບາຍສົ່ງເສີມ ວນກ ເຂົ້າຫາແຫລ່ງທຶນຂອງລັດຖະບານ ໃນລະດັບທີ່ໜ້າເພິ່ງພໍໃຈ. ສິ່ງທີ່ຂາດບໍ່ໄດ້ ແມ່ນການປະກອບສ່ວນດ້ານສະຕິປັນຍາດ້ວຍຄວາມຮັບຜິດຊອບສູງຂອງສະມາຊິກສະພາບໍລິຫານ ທສວ ທຸກທ່ານ ໃນການຊີ້ນຳການເຄື່ອນໄຫວວຽກງານຂອງ ທສວ ໃຫ້ກ້າວໄປສູ່ໂສມໜ້າໃໝ່ເທື່ອລະກ້າວ. ນະໂອກາດນີ້ ຂ້າພະເຈົ້າຂໍຕາງໜ້າໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສະພາບໍລິຫານ ທສວ ສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາທ່ານເຫລົ່ານັ້ນ. ພ້ອມນີ້, ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍ ມາຍັງທີມງານກອງເລຂາ ທສວ ທີ່ໄດ້ສຸມທຸກສະຕິປັນຍາປະຕິບັດວຽກງານໃຫ້ຫລ້ອນໜ້າທີ່, ມີຄວາມຮັບຜິດຊອບ ແລະ ມີການພົວພັນ ປະສານງານທີ່ດີ ກັບທຸກພາກສ່ວນທີ່ກ່ຽວຂ້ອງ. ທັງໝົດເຫລົ່ານີ້ ໄດ້ປະກອບສ່ວນເຮັດໃຫ້ ທສວ ກ້າວເດີນໄປດ້ວຍບາດກ້າວທີ່ໜັກແໜ້ນພໍສົມຄວນໃນປີ 2020.

ຮອງລັດຖະມົນຕີ
ປະທານສະພາບໍລິຫານ

ສົມຈິດ ອິນທະມິດ

# ສາລະບານ


ວິໄສທັດ ........ 1

ທີ່ຕັ້ງ, ໜ້າທີ່ ແລະ ເປົ້າໝາຍ ........ 2

ປະຫວັດຄວາມເປັນມາ ........ 3

ສະພາບໍລິຫານ ທສວ ........ 5

ຄະນະກໍາມະການກວດກາພາຍໃນ ທສວ ........ 7

ຄະນະອໍານວຍການ ........ 8

ໂຄງຮ່າງການຈັດຕັ້ງ ........ 9

**ພາກທີ 1 ການສະໜອງສິນເຊື່ອຂອງ ທສວ**

1.1. ບ້ວງເງິນດັດແກ້ມະຫາພາກ ມູນຄ່າ 32 ຕື້ກີບ ຜ່ານ ທະນາຄານພັດທະນາລາວ ........ 11

1.2 ສິນເຊື່ອບ້ວງເງິນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກທະນາຄານໂລກ ........ 13

1.3 ບ້ວງເງິນສະສົມຂອງ ທສວ ........ 15

1.4 ການສະໜອງສິນເຊື່ອບ້ວງເງິນລັດຖະບານປະກອບທຶນໃຫ້ ທສວ 200 ຕື້ກີບ ........ 16

**ພາກທີ 2 ການໃຫ້ທຶນໂຄງການວິຊາການ**

2.1 ການໃຫ້ທຶນສະໜັບສະໜູນໂຄງການວິຊາການ ........ 19

2.2 ຮູບພາບການເຄື່ອນໄຫວ ........ 20

**ພາກທີ 3 ວຽກບໍລິຫານ - ການເງິນ**

3.1 ວຽກບໍລິຫານ ........ 25

3.2 ວຽກງານການເງິນ ........ 27

3.2.1 ໃບລາຍງານລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຮ່ວງເງິນລາຍຮັບວິຊາການ ປະຈໍາປີ 2020 ........ 27

3.2.2 ໃບລາຍງານກະແສເງິນສົດ ຮ່ວງເງິນລາຍຮັບວິຊາການປະຈໍາປີ 2020 ........ 28

3.2.3 ໃບລາຍງານແຫຼ່ງທຶນ ແລະ ການນໍາໃຊ້ທຶນ ຮ່ວງເງິນ 200 ຕື້ກີບ ປະຈໍາປີ 2020 ........ 29

**ພາກທີ 4 ກິດຈະກໍາການເຄື່ອນໄຫວຂອງ ທສວ**

ກິດຈະກໍາການເຄື່ອນໄຫວຂອງ ທສວ ........ 30



ທສວ
ກອງທຶນສົ່ງເສີມ ວສນກ
SME Promotion Fund

# ວິໄສທັດ

## ສະໜັບສະໜູນດ້ານການເງິນ ໃຫ້ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຕີບໃຫຍ່ ກ້າວໄກ

## ທີ່ຕັ້ງ

ການຈັດຕັ້ງການເງິນໜຶ່ງຂອງລັດ ທີ່ຂຶ້ນກັບ ກະຊວງອຸດສາຫະກໍາ ແລະ ການຄ້າ.

## ໜ້າທີ່

- ລະດົມທຶນຈາກແຫຼ່ງຕ່າງໆຢ່າງລວມສູນເພື່ອຮັບປະກັນໃຫ້ມີທຶນຮອນທີ່ໝັ້ນຄົງ ແລະ ຕໍ່ເນື່ອງ ເຂົ້າໃນການສົ່ງເສີມ ວນກ ໃຫ້ເຕີບໃຫຍ່ ເຂັ້ມແຂງ ແລະ ຍືນຍົງ;
- ສະໜອງສິນເຊື່ອໃຫ້ ວນກ ໃນຮູບແບບຕ່າງໆ;
- ສະໜອງທຶນໃຫ້ກິດຈະການສົ່ງເສີມ ວນກ.

## ເປົ້າໝາຍ

- ຊ່ວຍ ວນກ ເຂັ້ມແຂງ ເຕີບໃຫຍ່ ຂະຫຍາຍຕົວ;
- ເພີ່ມທະວີການຜະລິດເປັນສິນຄ້າ, ການຄ້າ ແລະ ການບໍລິການ;
- ຂະຫຍາຍຖານລາຍຮັບໃຫ້ລັດຖະບານ;
- ສ້າງປະຖົມປັດໄຈໃຫ້ການຫັນເປັນອຸດສາຫະກໍາ ແລະ ທັນສະໄໝ;
- ປະກອບສ່ວນໃນການພັດທະນາເສດຖະກິດແຫ່ງຊາດ ແລະ ລຶບລ້າງຄວາມທຸກຍາກ.

# ປະຫວັດຄວາມເປັນມາ

**2020**

ລັດຖະບານປະກອບທຶນໃຫ້ 200 ຕື້ກີບ.

**2019**

ປັບປຸງດຳລັດ 123/ນຍ ມາເປັນ ດຳລັດວ່າດ້ວຍກອງທຶນສົ່ງເສີມ ວສກ ສະບັບເລກທີ 299/ລບ ລົງວັນທີ 4 ກັນຍາ 2019.

**2016**

- ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2016-2020 ນະໂຍບາຍສົ່ງເສີມການເຂົ້າຫາແຫຼ່ງທຶນ ເປັນນະໂຍບາຍທີ ② ໃນ ⑦
- 04 ທະນາຄານທຸລະກິດ ເລີ່ມປ່ອຍກູ້ພາຍໃຕ້ໂຄງການ A2F.

**2014**

ທຶນກູ້ຢືມຈາກທະນາຄານໂລກ ແລະ ຊ່ວຍເຫຼືອລ້າ 111,68 ຕື້ກີບພາຍໃຕ້ໂຄງການສົ່ງເສີມ ວສກ ເຂົ້າເຖິງແຫຼ່ງທຶນ (A2F).

**2012**

ເລີ່ມປ່ອຍສິນເຊື່ອໃຫ້ ວສກ ຜ່ານທະນາຄານພັດທະນາລາວ ແລະ ສະໜອງທຶນສະໜັບສະໜູນໂຄງການວິຊາການ.

**2011**

- ❖ ກົດໝາຍວ່າດ້ວຍການສົ່ງເສີມ ວສກ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 (ຍົກຈາກດຳລັດເລກທີ 42/ນຍ): ພາກທີ V ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
- ❖ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ 2011–2015 (ປັບປຸງການເຂົ້າຫາແຫລ່ງທຶນຂອງ ວສກ ໂດຍຜ່ານກອງທຶນສົ່ງເສີມ ວສກ ຊຶ່ງເຂດນະໂຍບາຍຈຸດສຸມອັນດັບທີ ② ຈາກ ⑦)
- ❖ ລັດຖະບານປະກອບທຶນບ້ວງເງິນດັດແກ້ມະຫາພາກ 32 ຕື້ກີບ ໃຫ້ ທສວ.

**2010**

ດຳລັດວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາ ວສກ ເລກທີ 123/ນຍ, ລົງວັນທີ 3 ມີນາ 2010:

- ກອງທຶນສົ່ງເສີມ ແລະ ພັດທະນາ ວສກ (ສະພາບໍລິຫານກອງທຶນ);
- ພະແນກຄຸ້ມຄອງກອງທຶນສົ່ງເສີມ ແລະ ພັດທະນາ ວສກ ພາຍໃຕ້ກົງຈັກຂອງຫ້ອງການສົ່ງເສີມ ແລະ ພັດທະນາ ວສກ /ກົມສົ່ງເສີມ ວສກ.




ທສວ ໄດ້ສະໜອງສິນເຊື່ອຜ່ານ 06 ທະນາຄານທຸລະກິດຄື: ທະນາຄານພັດທະນາລາວ, ທະນາຄານຮ່ວມທຸລະກິດລາວຫວຽດ, ທະນາຄານໄຊ່ງອນເທືອງຕິ່ນ ລາວ, ທະນາຄານລາວຈີນ, ທະນາຄານເອັສທີ ແລະ ທະນາຄານມາຣູຮານເຈແປນ ລາວ ເຊິ່ງສາມາດປ່ອຍສິນເຊື່ອໃຫ້ ວນກ 14 ແຂວງທົ່ວປະເທດ

ການໃຫ້ທຶນສະໜັບສະໜູນໂຄງການວິຊາການແມ່ນກະຈາຍໃນ 09 ແຂວງທົ່ວປະເທດ

## ສະພາບໍລິຫານ ທສວ



ທ່ານ ສົມຈິດ ອິນທະມິດ
ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ
ປະທານ ສະພາບໍລິຫານ



ທ່ານ ສຸລິວັດ ສຸວັນນະຈູມຄຳ
ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
ຮອງປະທານ ສະພາບໍລິຫານ



ທ່ານ ບຸນເຖິງ ດວງສະຫວັນ
ຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
ກຳມະການ ສະພາບໍລິຫານ



ທ່ານ ຄຳແກ້ວ ວິສີສົມບັດ
ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານ ແຫ່ງ  ສປປ ລາວ
ຄະນະ ສະພາບໍລິຫານ



ທ່ານ ສົມໄຊ ສີຊານົນ
ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງກະສິກຳ ແລະ ປ່າໄມ້
ຄະນະ ສະພາບໍລິຫານ



ທ່ານ ດາວອອນ ພະຈັນທະວົງ
ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
ຄະນະ ສະພາບໍລິຫານ



ທ່ານ ນາງ ລັດທະນາ ດວງບຸບຜາ
ຮອງຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
ຄະນະ ແລະ ເລຂາສະພາບໍລິຫານ

## ຄະນະກຳມະການກວດກາພາຍໃນ



ທ່ານ ສຸລິວັດ ສຸວັນນະຈູມຄຳ
ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
ປະທານ ກຳມະການກວດກາພາຍໃນ



ທ່ານ ບຸນເຖິງ ດວງສະຫວັນ
ຫົວໜ້າກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
ຮອງປະທານ ກຳມະການກວດກາພາຍໃນ



ທ່ານ ດາວອອນ ພະຈັນທະວົງ
ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
ກຳມະການກວດກາພາຍໃນ



ທ່ານ ບຸນທົງ ໝັ້ນອານົງ
ຮອງຫົວໜ້າກົມກວດກາ, ກະຊວງການເງິນ
ຄະນະ ກຳມະການກວດກາພາຍໃນ



ທ່ານ ເກີທ່າວ ເຈີຈັງ
ຮອງຫົວໜ້າກົມກວດກາ, ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະ ກຳມະການກວດກາພາຍໃນ

## ຄະນະອຳນວຍການ ທສວ



ທ່ານ ນາງ ລັດທະນາ ດວງບຸບຜາ
ຜູ້ອຳນວຍການກອງທຶນ



ທ່ານ ເພັດອານົງ ອິນສານ
ຮອງຜູ້ອຳນວຍການກອງທຶນ
ຮັບຜິດຊອບຊີ້ນຳ ຂະແໜງຄຸ້ມຄອງໂຄງການວິຊາການ



ທ່ານ ນາງ ແສງແກ້ວ ພຸດທະວົງ
ຮອງຜູ້ອຳນວຍການກອງທຶນ
ຮັບຜິດຊອບຊີ້ນຳ ຂະແໜງຄຸ້ມຄອງສິນເຊື່ອ

# ໂຄງຮ່າງການຈັດຕັ້ງ



# ພາກທີ I

# ການສະໜອງສິນເຊື່ອຂອງ ທສວ



## 1.1 ບ້ວງເງິນດັດແກ້ມະຫາພາກ ມູນຄ່າ 32 ຕື້ກີບ ຜ່ານ ທະນາຄານພັດທະນາລາວ

ໃນປີ 2020 ທະນາຄານພັດທະນາລາວ ໄດ້ນຳໃຊ້ທຶນເກັບຄືນຈາກລູກຄ້າ ປ່ອຍສິນເຊື່ອເພີ່ມ 19 ສັນຍາ ມູນຄ່າ 7,71 ຕື້ກີບ ໃຫ້ ວນກ 19 ຫົວໜ່ວຍ (ຜູ້ປະກອບກິດຈະການແມ່ຍິງກວມເອົາ 63,15%) ທີ່ຢູ່ ນະຄອນຫຼວງວຽງຈັນ 16 ຫົວໜ່ວຍ, ບໍລິຄຳໄຊ 1 ຫົວໜ່ວຍ, ຄຳມ່ວນ 1 ຫົວໜ່ວຍ ແລະ ຜົ້ງສາລີ 1 ຫົວໜ່ວຍ. ວນກ ດັ່ງກ່າວແມ່ນນອນໃນ 4 ຂະແໜງຄື: ກະສິກຳ 8 ສັນຍາ ມູນຄ່າ 3,32 ຕື້ກີບ, ອຸດສາຫະກຳປຸງແຕ່ງ 1 ສັນຍາ ມູນຄ່າ 650 ລ້ານກີບ, ບໍລິການ 5 ສັນຍາ ມູນຄ່າ 1,52 ຕື້ກີບ ແລະ ການຄ້າ 5 ສັນຍາ ມູນຄ່າ 2,22 ຕື້ກີບ.

**ຮູບພາບທີ 1**: ສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມຈຳນວນສັນຍາ.




ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານພັດທະນາລາວ.

**ຮູບພາບທີ 2**: ສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມວົງເງິນອະນຸມັດ (ກີບ).




ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານພັດທະນາລາວ.

**ຕາຕະລາງ 1:** ສະແດງການປ່ອຍກູ້ໃນປີ 2020 ຕາມທີ່ຢູ່ (ແຂວງ)

| ລ/ດ | ທີ່ຢູ່ | ສັນຍາ | ຈຳນວນ ວນກ | ວົງເງິນອະນຸມັດ (ຕື້ກີບ) |
|---|---|---|---|---|
| **1** | ນະຄອນຫຼວງວຽງຈັນ | 16 | 16 | 5,76 |
| **2** | ຜົ້ງສາລີ | 1 | 1 | 0,8 |
| **3** | ບໍລິຄຳໄຊ | 1 | 1 | 0,65 |
| **4** | ຄຳມ່ວນ | 1 | 1 | 0,5 |
| **ລວມ** | | **19** | **19** | **7,71** |

ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານພັດທະນາລາວ.

ລວມຍອດການປ່ອຍກູ້ເລີ່ມແຕ່ເດືອນ ກັນຍາ 2012 ເຖິງ ເດືອນ ທັນວາ 2020 ລວມມີ 265 ສັນຍາ, 130 ຫົວໜ່ວຍ (ຜູ້ປະກອບກິດຈະການແມ່ຍິງກວມເອົາ 59,23% ຂອງຈຳນວນຫົວໜ່ວຍທັງໝົດ) ເປັນຈຳນວນເງິນ 81,18 ຕື້ກີບ. ໃນນີ້ ປະກອບມີ ຂະແໜງການຄ້າ 80 ສັນຍາ, ກະສິກຳ 76 ສັນຍາ, ບໍລິການ 68 ສັນຍາ, ອຸດສາຫະກຳ 30 ສັນຍາ ແລະ ຫັດຖະກຳ 11 ສັນຍາ ຊຶ່ງນອນຢູ່ບັນດາແຂວງຄື: ນະຄອນຫຼວງວຽງຈັນ, ຄຳມ່ວນ, ຈຳປາສັກ, ສະຫວັນນະເຂດ, ບໍລິຄຳໄຊ, ຜົ້ງສາລີ, ວຽງຈັນ, ຫຼວງພະບາງ ແລະ ໄຊຍະບູລີ.

**ຕາຕະລາງ 2:** ສະແດງການປ່ອຍກູ້ໃນປີ 2012-2020 ຕາມທີ່ຢູ່ (ແຂວງ)

| ລ/ດ | ທີ່ຢູ່ | ສັນຍາ | ຈຳນວນ ວນກ | ວົງເງິນອະນຸມັດ (ຕື້ກີບ) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 233 | 112 | 68,34 |
| 2 | ວຽງຈັນ | 8 | 4 | 2,3 |
| 3 | ຄຳມ່ວນ | 4 | 3 | 2,15 |
| 4 | ຈຳປາສັກ | 3 | 1 | 2 |
| 5 | ຫຼວງພະບາງ | 6 | 4 | 1,86 |
| 6 | ໄຊຍະບູລີ | 7 | 3 | 1,58 |
| 7 | ສະຫວັນນະເຂດ | 2 | 1 | 1,5 |
| 8 | ບໍລິຄຳໄຊ | 1 | 1 | 0,65 |
| 9 | ຜົ້ງສາລີ | 1 | 1 | 0,8 |
| **ລວມ** | | **265** | **130** | **81,18** |

ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານພັດທະນາລາວ.

ທສລ ໄດ້ປະຕິບັດນະໂຍບາຍຫຼຸດອັດຕາດອກເບ້ຍ 2% ຕໍ່ເດືອນ ເປັນໄລຍະເວລາ 3 ເດືອນ (ກັນຍາ ຫາ ພະຈິກ 2020) ໂດຍແຈ້ງໃຫ້ທະນາຄານພັດທະນາລາວ (ທພລ) ຫລຸດດອກເບ້ຍດັ່ງກ່າວກັບ ວນກ (ທີ່ກຳລັງກູ້ຢືມ ບ້ວງເງິນຂອງ ທສລ) ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຈຳນວນ 62 ຫົວໜ່ວຍ (71 ສັນຍາ). ການປະຕິບັດດັ່ງກ່າວແມ່ນເພື່ອຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບ ແລະ ການແຜ່ລະບາດຂອງພະຍາດ ໂຄວິດ 19 ຕໍ່ເສດຖະກິດຂອງລາວ ສະບັບເລກທີ 31/ນຍ, ລົງວັນທີ 2 ເມສາ 2020.

## 1.2 ສິນເຊື່ອບ້ວງເງິນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກທະນາຄານໂລກ

ການສະໜອງສິນເຊື່ອບ້ວງນີ້ແມ່ນພາຍໃຕ້ໂຄງການເຂົ້າເຖິງແຫຼ່ງທຶນຂອງ ວນກ ມູນຄ່າ 111,68 ຕື້ກີບ ແມ່ນຜ່ານ 4 ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ (ທະນາຄານລາວຈີນ, ທະນາຄານເອັສທີ, ທະນາຄານໄຊງ່ອນເທືອງຕື່ນລາວ ຫຼື ຊາຄອມແບັງ ລາວ ແລະ ທະນາຄານຮ່ວມທຸລະກິດ ລາວຫວຽດ). ໃນປີ 2020 ທະນາຄານເອັສທີ, ທະນາຄານລາວຫວຽດ ແລະ ທະນາຄານໄຊງ່ອນເທືອງຕື່ນລາວ ສາມາດໝູນໃຊ້ເງິນລູກຄ້າເກົ່າທີ່ຊຳລະຄືນນຳມາປ່ອຍກູ້ໃຫ້ລູກຄ້າລາຍໃໝ່ໄດ້ຈຳນວນ 26 ສັນຍາ, 26 ຫົວໜ່ວຍ (ຜູ້ປະກອບກິດຈະການແມ່ຍິງກວມເອົາ 69,23% ຂອງຈຳນວນຫົວໜ່ວຍທັງໝົດ) ເປັນຈຳນວນເງິນທັງໝົດ 14,74 ຕື້ກີບ. ໃນນີ້ປະກອບມີ 3 ຂະແໜງຄື: ການຄ້າ 17 ສັນຍາ ມູນຄ່າ 9,29 ຕື້ກີບ, ບໍລິການ 7 ສັນຍາ ມູນຄ່າ 4,15 ຕື້ກີບ, ອຸດສາຫະກຳ 2 ສັນຍາ ມູນຄ່າ 1,3 ຕື້ກີບ. ວນກ ທີ່ໄດ້ຮັບສິນເຊື່ອໃນບ້ວງນີ້ແມ່ນມາຈາກນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ.

**ຮູບພາບທີ 3**: ຮູບພາບສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມຈຳນວນສັນຍາ.




ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານລາວຈີນ, ທະນາຄານເອັສທີ, ທະນາຄານໄຊງ່ອນເທືອງຕື່ນລາວ ແລະ ທະນາຄານຮ່ວມທຸລະກິດລາວຫວຽດ.

**ຮູບພາບທີ 4**: ຮູບພາບສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມວົງເງິນອະນຸມັດ (ກີບ).




ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານລາວຈີນ, ທະນາຄານເອັສທີ, ທະນາຄານໄຊງ່ອນເທືອງຕິ່ນລາວ ແລະ ທະນາຄານຮ່ວມທຸລະກິດລາວຫວຽດ.

**ຕາຕາລາງ 3**: ສະແດງການປ່ອຍກູ້ໃນປີ 2020 ຕາມທີ່ຢູ່ (ແຂວງ)

| ລ/ດ | ທີ່ຢູ່ | ສັນຍາ | ຈຳນວນ ວນກ | ວົງເງິນອະນຸມັດ (ຕື້ກີບ) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 14 | 14 | 8,73 |
| 2 | ຈຳປາສັກ | 8 | 8 | 3,36 |
| 3 | ສະຫວັນນະເຂດ | 4 | 4 | 2,65 |
| **ລວມ** | | **26** | **26** | **14,74** |

ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານລາວຈີນ, ທະນາຄານເອັສທີ, ທະນາຄານໄຊງ່ອນເທືອງຕິ່ນລາວ ແລະ ທະນາຄານຮ່ວມທຸລະກິດລາວຫວຽດ.

ລວມຍອດການປ່ອຍກູ້ເລີ່ມແຕ່ເດືອນ ກັນຍາ 2016 ຫາ ທັນວາ 2020 ລວມມີ 202 ສັນຍາ, 191 ຫົວໜ່ວຍ (ຜູ້ປະກອບກິດຈະການແມ່ຍິງກວມເອົາ 59,16% ຂອງຈຳນວນຫົວໜ່ວຍທັງໝົດ) ເປັນຈຳນວນເງິນທັງໝົດ 132,56 ຕື້ກີບ. ໃນນັ້ນ ປະກອບມີ 5 ຂະແໜງຄື: ການຄ້າ 109 ສັນຍາ ມູນຄ່າ 67,79 ຕື້ກີບ ກວມເອົາ 54%, ບໍລິການ 67 ສັນຍາ ມູນຄ່າ 48,93 ຕື້ກີບ ກວມເອົາ 33%, ກະສິກຳ 5 ສັນຍາ ມູນຄ່າ 1,86 ຕື້ກີບ ກວມເອົາ 2%, ຫັດຖະກຳ 5 ສັນຍາ ມູນຄ່າ 2,62 ຕື້ກີບ ກວມເອົາ 2%, ແລະ ອຸດສາຫະກຳ 16 ສັນຍາ ມູນຄ່າ 11,35 ຕື້ກີບ ກວມເອົາ 8%. ວນກ ທີ່ໄດ້ຮັບສິນເຊື່ອໃນບ້ວງນີ້ແມ່ນຢູ່ ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ, ຄຳມ່ວນ, ຊຽງຂວາງ, ຫຼວງພະບາງ, ຫຼວງນ້ຳທາ ແລະ ວຽງຈັນ.

**ຕາຕາລາງ 4:** ສະແດງການປ່ອຍກູ້ແຕ່ປີ 2016-2020 ຕາມທີ່ຢູ່ (ແຂວງ)

| ລ/ດ | ທີ່ຢູ່ | ສັນຍາ | ຈຳນວນ ວນກ | ວົງເງິນອະນຸມັດ (ຕື້ກີບ) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 153 | 145 | 104,47 |
| 2 | ສະຫວັນນະເຂດ | 18 | 18 | 12,37 |
| 3 | ຈຳປາສັກ | 13 | 12 | 5,21 |
| 4 | ຊຽງຂວາງ | 3 | 3 | 3 |
| 5 | ວຽງຈັນ | 5 | 3 | 2,7 |
| 6 | ຫຼວງພະບາງ | 5 | 5 | 2,3 |
| 7 | ຄຳມ່ວນ | 4 | 4 | 1,6 |
| 8 | ຫຼວງນ້ຳທາ | 1 | 1 | 0,91 |
| **ລວມ** | | **202** | **191** | **132,56** |

ແຫຼ່ງຂໍ້ມູນ: ລາຍງານການປ່ອຍກູ້ປະຈຳເດືອນຂອງທະນາຄານລາວຈີນ, ທະນາຄານເອັສທີ, ທະນາຄານໄຊ່ງ່ອນເທືອງຕິນລາວ ແລະ ທະນາຄານຮ່ວມທຸລະກິດລາວຫວຽດ.

## 1.3 ບ້ວງເງິນສະສົມຂອງ ທສວ

ທສວ ສະໜອງທຶນສະສົມທີ່ໄດ້ຈາກດອກເບ້ຍໃຫ້ສະຖາບັນການເງິນ ເພື່ອປ່ອຍສິນເຊື່ອໃຫ້ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ດັ່ງນີ້:

1) **ທະນາຄານຮ່ວມທຸລະກິດລາວຫວຽດ 3,8 ຕື້ກີບ** ກຳນົດອັດຕາດອກເບ້ຍປ່ອຍກູ້ໃຫ້ ວນກ 5,5-6% ຕໍ່ປີ ໂດຍໄດ້ເຊັນສັນຍາສະໜອງທຶນໃນທ້າຍປີ 2019, ປັດຈຸບັນ ສາມາດປ່ອຍກູ້ໄດ້ຈຳນວນ 1 ລາຍລວມມູນຄ່າ 1,6 ຕື້ກີບ ໃນຂະແໜງການທ່ອງທ່ຽວ. ເຫດຜົນທີ່ບໍ່ສາມາດປ່ອຍກູ້ໄດ້ໝົດ ຍ້ອນຂະແໜງການບູລິມະສິດແມ່ນ 4 ຂະແໜງການ ຄືກັບບ້ວງອັດຕາດອກເບ້ຍ **3%** ຕໍ່ປີ ເຮັດໃຫ້ ວນກ ສົນໃຈບ້ວງອັດຕາດອກເບ້ຍຕໍ່າກວ່າ ເຖິງວ່າ ບ້ວງນີ້ມີການກຳນົດເງື່ອນໄຂໜ້ອຍກວ່າກໍ່ຕາມ.

2) **04 ສະຖາບັນການເງິນຈຸລະພາກ** (ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນປະຕູຄຳ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນເພັກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ (BDP) ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນໄຊອຸດົມ) ຈຳນວນ 2,02 ຕື້ກີບ ແບ່ງໃຫ້ສະຖາບັນລະ 505 ລ້ານກີບ ເພື່ອສະໜອງສິນເຊື່ອໃຫ້ຈຸນລະວິສາຫະກິດ ທີ່ນອນໃນຂະແໜງກະສິກຳ ປູກຝັງ ແລະ ລ້ຽງສັດ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ, ຫັດຖະກຳ ແລະ ການຄ້າ ແລະ ການບໍລິການ ໃນອັດຕາດອກເບ້ຍບໍ່ເກີນ **1%** ຕໍ່ເດືອນ ຫຼື **12%** ຕໍ່ປີ ໂດຍໄດ້ເຊັນສັນຍາສະໜອງທຶນ ໃນວັນທີ 3 ທັນວາ 2020.

3) **ກອງທຶນນາງຟ້າ (ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ)** ຈຳນວນ 500 ລ້ານກີບ ເພື່ອນຳໄປຄ້ຳປະກັນສິນເຊື່ອກັບທະນາຄານທຸລະກິດໃຫ້ຈຸນລະວິສາຫະກິດ ແລະ ກຸ່ມຜູ້ຜະລິດກະສິກຳ ທີ່ບໍ່ມີຫຼັກຊັບພຽງພໍໃນການກູ້ຢືມເງິນ ໂດຍໄດ້ເຊັນສັນຍາສະໜອງທຶນ ໃນວັນທີ 3 ທັນວາ 2020.

## 1.4 ການສະໜອງສິນເຊື່ອບ້ວງເງິນລັດຖະບານປະກອບທຶນໃຫ້ ທສວ 200 ຕື້ກີບ

ທສວ ໄດ້ສະໜອງທຶນບ້ວງນີ້ຈຳນວນທັງໝົດ 177 ຕື້ກີບໃຫ້ 4 ທະນາຄານທຸລະກິດ ເພື່ອປ່ອຍສິນເຊື່ອໃຫ້ ວນກ ຄື: ທະນາຄານພັດທະນາລາວ ຈຳນວນ 50 ຕື້ກີບ, ທະນາຄານໄຊ່ງ່ອນເທືອງຕື່ນລາວ ຈຳນວນ 50,5 ຕື້ກີບ, ທະນາຄານຮ່ວມທຸລະກິດລາວຫວຽດ ທຶນຈຳນວນ 50,5 ຕື້ກີບ ແລະ ທະນາຄານມາຣູຮານເຈແປນລາວ ຈຳນວນ 26 ຕື້ກີບ. ພ້ອມນັ້ນ, ຍັງໄດ້ຈັດສັນທຶນຈຳນວນ 5 ຕື້ກີບ ເພື່ອສະໜອງໃຫ້ກອງທຶນພັດທະນາໄຊສົມບູນ ເພື່ອນຳໄປປ່ອຍສິນເຊື່ອໃຫ້ ວນກ ທີ່ນອນໃນຂະແໜງບູລິມະສິດ ຢູ່ທີ່ແຂວງ ໄຊສົມບູນ.

ໃນປີ 2020 ບັນດາທະນາຄານດັ່ງກ່າວ ໄດ້ປ່ອຍສິນເຊື່ອໃຫ້ ວນກ ແລ້ວ 92 ຫົວໜ່ວຍ, 114 ສັນຍາ (ຜູ້ປະກອບກິດຈະການແມ່ຍິງກວມເອົາ 38%) ເປັນຈຳນວນເງິນ 140,7 ຕື້ກີບ. ໃນນັ້ນປະກອບມີ ຂະແໜງກະສິກຳ ປູກຝັງ ແລະ ລ້ຽງສັດ 76 ສັນຍາ ຈຳນວນ 89,35 ຕື້ກີບ, ອຸດສາຫະກຳປຸງແຕ່ງ 8 ສັນຍາ ຈຳນວນ 8,49 ຕື້ກີບ, ທ່ອງທ່ຽວ 13 ສັນຍາ ຈຳນວນ 25,92 ຕື້ກີບ ແລະ ຫັດຖະກຳ 17 ສັນຍາ ຈຳນວນ 16,98 ຕື້ກີບ. ວນກ ທີ່ໄດ້ຮັບສິນເຊື່ອໃນບ້ວງນີ້ແມ່ນຢູ່ ນະຄອນຫຼວງວຽງຈັນ 42 ສັນຍາ, ຄຳມ່ວນ 9 ສັນຍາ, ຈຳປາສັກ 8 ສັນຍາ, ສະຫວັນນະເຂດ 5 ສັນຍາ, ສາລະວັນ 6 ສັນຍາ, ຊຽງຂວາງ 9 ສັນຍາ, ບໍລິຄຳໄຊ 7 ສັນຍາ, ຜົ້ງສາລີ 1 ສັນຍາ, ວຽງຈັນ 10 ສັນຍາ, ຫົວພັນ 2 ສັນຍາ, ຫຼວງນ້ຳທາ 1 ສັນຍາ, ຫຼວງພະບາງ 8 ສັນຍາ, ອຸດົມໄຊ 3 ສັນຍາ ແລະ ອັດຕະປື 3 ສັນຍາ.

**ຮູບພາບທີ 5**: ສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມຈຳນວນສັນຍາ.




ແຫຼ່ງທີ່ມາ: ທະນາຄານພັດທະນາລາວ, ທະນາຄານໄຊ່ງ່ອນເທືອງຕື່ນລາວ, ທະນາຄານຮ່ວມທຸລະກິດລາວຫວຽດ ແລະ ທະນາຄານມາຣູຮານເຈແປນ ລາວ.

**ຮູບພາບທີ 6**: ສະແດງການປ່ອຍກູ້ໃນປີ 2020 ຈັດແບ່ງຕາມວົງເງິນອະນຸມັດ (ກີບ).




ແຫຼ່ງທີ່ມາ: ທະນາຄານພັດທະນາລາວ, ທະນາຄານໄຊງ່ອນເທືອງຕິ່ນລາວ, ທະນາຄານຮ່ວມທຸລະກິດລາວຫວຽດ ແລະ ທະນາຄານມາຣູຮານ ເຈແປນ ລາວ.

**ຕາຕາລາງ 5**: ສະແດງການປ່ອຍກູ້ໃນປີ 2020 ຕາມທີ່ຢູ່ (ແຂວງ)

| ລ/ດ | ທີ່ຢູ່ | ສັນຍາ | ຈຳນວນ ວວນກ | ວົງເງິນອະນຸມັດ (ຕື້ກີບ) |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 42 | 33 | 59,1 |
| 2 | ວຽງຈັນ | 10 | 9 | 18,49 |
| 3 | ສະຫວັນນະເຂດ | 5 | 3 | 12 |
| 4 | ຄຳມ່ວນ | 9 | 6 | 11 |
| 5 | ຈຳປາສັກ | 8 | 8 | 10,2 |
| 6 | ຫຼວງພະບາງ | 8 | 7 | 7,95 |
| 7 | ອັດຕະປື | 3 | 2 | 5 |
| 8 | ບໍລິຄຳໄຊ | 7 | 4 | 4,2 |
| 9 | ຊຽງຂວາງ | 9 | 7 | 3,6 |
| 10 | ອຸດົມໄຊ | 3 | 3 | 2,75 |
| 11 | ຜົ້ງສາລີ | 1 | 1 | 2,5 |
| 12 | ສາລະວັນ | 6 | 6 | 2,4 |
| 13 | ຫຼວງນ້ຳທາ | 1 | 1 | 1 |
| 14 | ຫົວພັນ | 2 | 2 | 0,55 |
| **ລວມ** | | **114** | **92** | **140,74** |

ແຫຼ່ງທີ່ມາ: ທະນາຄານພັດທະນາລາວ, ທະນາຄານໄຊງ່ອນເທືອງຕິ່ນລາວ, ທະນາຄານຮ່ວມທຸລະກິດລາວຫວຽດ ແລະ ທະນາຄານມາຣູຮານ ເຈແປນ ລາວ.



# ພາກທີ II

# ການໃຫ້ທຶນໂຄງການວິຊາການ

## 2.1 ການໃຫ້ທຶນສະໜັບສະໜູນໂຄງການວິຊາການ

ໃນປີ 2020 ທສວ ໄດ້ພິຈາລະນາສະໜອງທຶນສະໜັບສະໜູນ 15 ໂຄງການ ແຕ່ສຳເລັດການອະນຸມັດງົບປະມານຕົວຈິງໃຫ້ພຽງ 09 ໂຄງການ ລວມມູນຄ່າ 460,11 ລ້ານກີບ, ສ່ວນອີກ 6 ໂຄງການແມ່ນຍົກໄປອະນຸມັດງົບປະມານໃນປີ 2021 ລາຍລະອຽດໃນຕາຕະລາງລຸ່ມນີ້:

| ລ/ດ | ລະຫັດໂຄງການທີ່ສະເໜີ | ຊື່ໂຄງການ | ກິດຈະກຳ | ໜ່ວຍງານຈັດຕັ້ງປະຕິບັດ | ວົງເງິນອະນຸມັດ (ລ້ານກີບ) |
|---|---|---|---|---|---|
| 1 | TA03/2020 | ໂຄງການງານວາງສະແດງສິນຄ້າຫັດຖະກຳ, ສິນຄ້າກະສິກຳ, ອຸດສາຫະກຳ ຄັ້ງທີ 25 ປະຈຳປີ 2020 ແລະ ການຝຶກອົບຮົມສ້າງຄວາມເຂົ້າໃຈໃນການເຂົ້າເຖິງແຫ່ງທຶນ SME ຂອງເມືອງນາຊາຍທອງ ແຂວງ ນະຄອນຫຼວງວຽງຈັນ. | ງານວາງສະແດງ ແລະ ຈັດຝຶກອົບຮົມ | ຫ້ອງການ ອຄ ເມືອງນາຊາຍທອງ | 6,03 |
| 2 | TA04/2020 | ໂຄງການງານເທດສະການອາຫານປະຈຳປີ 2020 | ງານວາງສະແດງ | ສະມາຄົມນັກທຸລະກິດແມ່ຍິງລາວ | 42,5 |
| 3 | TA13/2020 | ໂຄງການສົ່ງເສີມວັນຫັດຖະກຳແຫ່ງຊາດ ວັນທີ 1 ພະຈິກ 2020 | ຝຶກອົບຮົມ | ກົມອຸດສາຫະກຳ ແລະ ຫັດຖະກຳ | 66,9 |
| 4 | TA001/2020 | ໂຄງການຝຶກອົບຮົມການວາງແຜນທຸລະກິດ, ວາງແຜນການເງິນ ແລະ ການບັນຊີ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ວັນທີ 16–20 ພະຈິກ 2020 | ຝຶກອົບຮົມ | ພະແນກສະໜັບສະໜູນ ວນກ | 30,29 |
| 5 | TA002/2020 | ໂຄງການຝຶກອົບຮົມການວາງແຜນທຸລະກິດ, ວາງແຜນການເງິນ ແລະ ການບັນຊີ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ວັນທີ 7–11 ທັນວາ 2020 | ຝຶກອົບຮົມ | ພະແນກອຸດສາຫະກຳ ແລະ ການຄ້າແຂວງບໍລິຄຳໄຊ | 47,58 |
| 6 | TA27/2020 | ໂຄງການຕະຫຼາດນັດ ແລະ ວາງສະແດງສິນຄ້າ (ODOP) ເນື່ອງໃນໂອກາດເປີດກອງປະຊຸມແລກປ່ຽນບົດຮຽນ ແລະ ຖອດຖອນບົດຮຽນວຽກງານອຸດສາຫະກຳ ແລະ ການຄ້າ 8 ແຂວງພາກເໜືອ, ຄັ້ງທີ VI ຢູ່ທີ່ແຂວງຜົ້ງສາລີ,ໃນລະຫວ່າງວັນທີ 8–10 ທັນວາ 2020 | ງານວາງສະແດງ | ພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ | 37,2 |
| 7 | TA22/2020 | ໂຄງການສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານສົ່ງເສີມ SME ປະຈຳປີ 2020 | ຝຶກອົບຮົມ | ກົມສົ່ງເສີມວິສາຫະກິດຂະ ໜາດນ້ອຍ ແລະ ກາງ | 99,96 |
| 8 | TA20/2020 | ໂຄງການສົ່ງເສີມສ້າງເຕັກນິກ ວິຊາການທີ່ທັນສະໄໝ ແລະ ຖ່າຍທອດຄວາມຮູ້ສູ່ທ້ອງຖິ່ນໃນການປູກມອນ ລ້ຽງມ້ອນເປັນສິນຄ້າ | ຝຶກອົບຮົມ | ສະມາຄົມຫັດຖະກຳລາວ (ບໍລິສັດສອງມືນາງ) | 64,32 |
| 9 | TA06/2020 | ໂຄງການຈັດສຳມະນາເຜີຍແຜ່ປຶ້ມຄູ່ມືສົ່ງອອກໄປ ສປ ຈີນ ຢູ່ 8 ແຂວງພາກເໜືອ(ໄຊຍະບູລີ, ບໍ່ແກ້ວ, ຫົວພັນ, ອຸດົມໄຊ, ຫຼວງພະບາງ, ຫຼວງນໍ້າທາ, ຜົ້ງສາລີ ແລະ ແຂວງວຽງຈັນທີ່ ພອດຫຼວງນໍ້າທາ | ຝຶກອົບຮົມ | ກົມສົ່ງເສີມການຄ້າ | 65,23 |
| | | **ລວມ** | | | **460,11** |

## 2.2 ຮູບພາບການເຄື່ອນໄຫວ

### ໂຄງການສົ່ງເສີມສ້າງເຕັກນິກ ວິຊາການທີ່ທັນສະໄໝ ແລະ ຖ່າຍທອດຄວາມຮູ້ສູ່ທ້ອງຖິ່ນໃນການປູກມອນ ລ້ຽງມ້ອນເປັນສິນຄ້າ





### ໂຄງການຈັດສຳມະນາເຜີຍແຜ່ປື້ມຄູ່ມືສົ່ງອອກໄປ ສປ ຈີນ ຢູ່ 8 ແຂວງພາກເໜືອ





## ໂຄງການຕະຫຼາດນັດ ແລະ ວາງສະແດງສິນຄ້າ (ODOP) ຢູ່ທີ່ແຂວງຜົ້ງສາລີ






## ໂຄງການສົ່ງເສີມວັນຫັດຖະກຳແຫ່ງຊາດ ວັນທີ 1 ພະຈິກ 2020





ໂຄງການງານວາງສະແດງສິນຄ້າຫັດຖະກຳ, ສິນຄ້າກະສິກຳ, ອຸດສາຫະກຳ ຄັ້ງທີ 25 ປະຈຳປີ 2020 ແລະ ການຝຶກອົບຮົມສ້າງຄວາມເຂົ້າໃຈໃນການເຂົ້າເຖິງແຫຼ່ງທຶນ SME ຂອງເມືອງນາຊາຍທອງ





ໂຄງການງານເທດສະການອາຫານປະຈຳປີ 2020






## ໂຄງການຝຶກອົບຮົມການວາງແຜນທຸລະກິດ, ການເງິນ ແລະ ການບັນຊີ ສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ວັນທີ 16-20 ພະຈິກ 2020





## ໂຄງການຝຶກອົບຮົມການວາງແຜນທຸລະກິດ, ການເງິນ ແລະ ການບັນຊີ ສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ວັນທີ 7-11 ທັນວາ 2020








# ພາກທີ III

# ວຽກບໍລິຫານ - ການເງິນ

## 3.1 ວຽກບໍລິຫານ

ໃນປີ 2020 ທສວ ໄດ້ມີການຜັນຂະຫຍາຍດຳລັດ 299/ລບ ໂດຍການປັບປຸງ ແລະ ກຳນົດຕຳແໜ່ງງານ ເພື່ອໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ຂອງ ທສວ, ຈັດຈ້າງພະນັກງານຕາມສັນຍາ ເພື່ອບັນຈຸເຂົ້າໃນແຕ່ລະຕຳແໜ່ງງານ, ປັບປຸງລະບຽບພາຍໃນຂອງ ທສວ, ໂຄສະນາປະຊາສຳພັນວຽກງານຂອງ ທສວ ດັ່ງມີລາຍລະອຽດລຸ່ມນີ້:

1. **ຜັນຂະຫຍາຍດຳລັດ 299/ລບ:**
   - ຄົ້ນຄວ້າຈັດຕັ້ງຜັນຂະຫຍາຍມະຕິຕົກລົງກອງປະຊຸມລັດຖະບານເປີດກວ້າງຄັ້ງທີ II ປີ 2019 ສະບັບເລກທີ 13/ລບ, ລົງວັນທີ 27 ທັນວາ 2019 ໂລແມັງ V: ໃຫ້ ທສວ ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ ສອດຄ່ອງກັບດຳລັດ 299/ລບ ແນໃສ່ບໍ່ໃຫ້ຖືລາຍຮັບຂອງ ທສວ ເປັນລາຍຮັບວິຊາການ ແລະ ໃຫ້ ທສວ ສາມາດຖືບັນຊີສະເພາະ ໂດຍປ່ຽນຈາກການຖືບັນຊີຂອງອົງການຈັດຕັ້ງລັດ (ບັນຊີງົບປະມານແຫ່ງລັດ);
   - ຄົ້ນຄວ້າອອກແບບໂຄງການສິນເຊື່ອຈຸນລະວິສາຫະກິດ ແລະ ໂຄງການທຶນສົມທົບ;
   - ທສວ ອອກຄຳແນະນຳ ແລະ ຂໍ້ຕົກລົງ ເພື່ອຜັນຂະຫຍາຍບາງມາດຕາຂອງດຳລັດ 299/ລບຄື:
     - ຄຳແນະນຳ ກ່ຽວກັບ ຂະແໜງບູລິມະສິດ ແລະ ຂົງເຂດບູລິມະສິດຂອງລັດຖະບານ ສະບັບເລກທີ 211/ທສວ ລົງວັນທີ 24 ເມສາ 2020;
     - ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ມາດຕາ 15 ຂອງດຳລັດ 299/ລບ ສະບັບເລກທີ 303/ທສວ ລົງວັນທີ 15 ມິຖຸນາ 2020;
     - ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການກວດກາພາຍໃນຂອງ ທສວ ສະບັບເລກທີ 553/ທສວ ລົງວັນທີ 24 ສິງຫາ 2020.

2. **ໄດ້ປັບປຸງລະບຽບພາຍໃນຂອງ ທສວ:**
   - ລະບຽບການຄຸ້ມຄອງບໍລິຫານ ທສວ ສະບັບເລກທີ 232/ທສວ ລົງວັນທີ 06 ພຶດສະພາ 2020;
   - ລະບຽບການສະໜອງທຶນໃຫ້ໂຄງການວິຊາການ ສະບັບເລກທີ 391/ທສວ ລົງວັນທີ 13 ກໍລະກົດ 2020;
   - ບົດແນະນຳການປະເມີນໂຄງການວິຊາການ ຂອງ ທສວ ສະບັບເລກທີ 392/ທສວ ລົງວັນທີ 13 ກໍລະກົດ 2020;
   - ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະເມີນໂຄງການວິຊາການຂອງ ທສວ ສະບັບເລກທີ 393/ທສວ ລົງວັນທີ 13 ກໍລະກົດ 2020;
   - ຂໍ້ຕົກລົງວ່າດ້ວຍເງິນເບ້ຍປະຊຸມ-ນະໂຍບາຍ ຂອງສະມາຊິກສະພາບໍລິຫານ ແລະ ພະນັກງານ ທສວ ສະບັບເລກທີ 122/ທສວ, ລົງວັນທີ 10 ມີນາ 2015;
   - ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງບໍລິຫານຄັງເງິນສົດຂອງ ທສວ ສະບັບເລກທີ 051/ທສວ, ລົງວັນທີ 6 ສິງຫາ 2021.

3. **ປັບປຸງ ແລະ ກຳນົດຕຳແໜ່ງງານ:** ທສວ ນອກຈາກ ມີສະພາບໍລິຫານ ທສວ ເປັນອົງການບໍລິຫານສູງສຸດ ທີ່ບໍ່ປະຈຳການ ເຮັດໜ້າທີ່ຊີ້ນຳ-ນຳພາ ແລະ ຕິດຕາມກວດກາການຄຸ້ມຄອງບໍລິຫານ ທສວ ຍັງມີກອງເລຂາ ທສວ ເຮັດວຽກຂັບເຄື່ອນວຽກງານປະຈຳວັນຂອງ ທສວ. ຕາມການກຳນົດຕຳແໜ່ງງານ ກອງເລຂາ ທສວ ຕ້ອງການພະນັກງານທັງໝົດ 15 ທ່ານ ໃນນັ້ນ ປະກອບມີ ຜູ້ອຳນວຍການກອງທຶນ 1 ທ່ານ ແລະ ຮອງຜູ້ອຳນວຍການກອງທຶນ 3 ທ່ານ, ຫົວໜ້າຂະແໜງ 3 ທ່ານ ແລະ ພະນັກງານວິຊາການ 11 ທ່ານ ເພື່ອມາຈັດຕັ້ງປະຕິບັດ 28 ໜ້າວຽກໃຫຍ່ ແລະ 63 ກິດຈະກຳຍ່ອຍ.

4. **ຈັດຈ້າງພະນັກງານຕາມສັນຍາ:** ທສວ ໄດ້ຈັດຈ້າງພະນັກງານຕາມສັນຍາເພື່ອບັນຈຸເຂົ້າໃນຕໍາແໜ່ງງານທີ່ຍັງວ່າງ 4 ຕໍາແໜ່ງຄື: ພະນັກງານບໍລິຫານ, ພະນັກງານຈັດຊື້-ຈັດຈ້າງ, ພະນັກງານຕິດຕາມ ແລະ ປະເມີນຜົນ, ພະນັກງານຜູ້ຊ່ອຍສິນເຊື່ອ.

5. **ໂຄສະນາປະຊາສໍາພັນ** :
    - ຈັດກອງປະຊຸມເຜີຍແຜ່ ດໍາລັດວ່າດ້ວຍກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ ໃຫ້ພະນັກງານຢູ່ຂັ້ນທ້ອງຖິ່ນ ໃນທົ່ວປະເທດ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບ ພາລະບົດບາດ ແລະ ໜ້າທີ່ຂອງ ທສວ;
    - ສ້າງ ແລະ ຈັດພິມແຜ່ນພັບ ກ່ຽວກັບ ການເຂົ້າເຖິງແຫຼ່ງທຶນບ້ວງ 200 ຕື້ກີບ, ການເຂົ້າຫາແຫຼ່ງທຶນບ້ວງໂຄງການສົ່ງເສີມການເຂົ້າຫາແຫຼ່ງທຶນຂອງ ວນກ, ແລະ ພາລະບົດບາດ ແລະ ທີ່ຕັ້ງຂອງ ທສວ;
    - ສ້າງສາລະຄະດີສັ້ນ 15 ນາທີ ແລະ 5 ນາທີ ກ່ຽວກັບ ການສົ່ງເສີມ ວນກ ເຂົ້າຫາແຫລ່ງທຶນ ຂອງ ທສວ;
    - ສ້າງເວັບ Laos SME Fund ແລະ ເອັບພິເຄຊັນ ຂອງ ທສວ;
    - ສ້າງລາຍການວິທະຍຸ ຮອບຮູ້ຄູ່ ວນກ ຄື້ນ 103,7 Mz ອອກອາກາດວັນ ສຸກ, ເສົາ, ທິດ ເວລາ 18:00-19:00 ໂມງ.

## 3.2 ວຽກງານການເງິນ

### 3.2.1 ໃບລາຍງານລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຮ່ວງເງິນລາຍຮັບວິຊາການ ປະຈຳປີ 2020

| | ປະຈຳປີ 2020 | ປະຈຳປີ 2019 |
|---|---|---|
| **ລາຍຮັບ** | | |
| ລາຍຮັບຈາກດອກເບ້ຍເງິນໃຫ້ກູ້ຢືມ | 2.911.259.629 | 4.498.223.054 |
| ລາຍຮັບຕົ້ນທຶນເງິນໃຫ້ກູ້ຢືມ | 6.482.400.000 | 200.000.000 |
| ລາຍຮັບ ອື່ນໆ | 894.556.000 | 41.710.000 |
| **ລວມຍອດລາຍຮັບທັງໝົດ** | **10.288.215.629** | **4.739.933.054** |
| **ລາຍຈ່າຍ** | | |
| ລາຍຈ່າຍບໍລິຫານປົກກະຕິອື່ນໆ | 479.225.900 | 636.600.572 |
| ລາຍຈ່າຍໂຄງການສະໜອງສິນເຊື່ອໃຫ້ ວນກ ຜ່ານທະນາຄານທຸລະກິດ ແລະ ສະຖາບັນການເງິນ | 9.120.000.000 | 3.806.000.000 |
| ລາຍຈ່າຍໂຄງການສົ່ງເສີມວິຊາການ | 70.532.000 | 500.741.000 |
| ລາຍຈ່າຍຊຳລະໜີ້ດອກເບ້ຍເງິນກູ້ຢືມໃຫ້ກະຊວງການເງິນ | 1.495.796.496 | 2.462.086.735 |
| ລາຍຈ່າຍມອບເງິນເຂົ້າງົບປະມານແຫ່ງລັດ | 11.165.688.496 | 7.412.340.000 |
| **ລວມຍອດລາຍຈ່າຍທັງໝົດ** | **22.331.242.892** | **14.817.768.307** |
| **ລາຍການປັບປຸງ** | | |
| ລາຍການຕິດຕາມ ການຫັກເງິນປະກັນສັງຄົມ ແລະ ອາກອນລາຍໄດ້ | 3.580.000 | - |
| ຍອດເຫລືອງົບປະມານປີກ່ອນ | 2.793.656.392 | 1.844.942.454 |
| ລາຍການຕິດຕາມ ການຮັບເງິນຈາກຄັງເງິນແຫ່ງຊາດ | 9.072.035.396 | 5.439.070.307 |
| **ລາຍຮັບ/ລາຍຈ່າຍ ສຸດທິ** (1) | **(173.755.475)** | **(2.793.822.492)** |

**ໝາຍເຫດ:**

(1) ລາຍຮັບ/ລາຍຈ່າຍສຸດທິ ເປັນລາຍຮັບທີ່ເກັບໄດ້ໃນປີ ເຊິ່ງຍັງບໍ່ໄດ້ລວມກັບຍອດເຫຼືອງົບປະມານຂອງປີຜ່ານມາ

*ບັນດາລາຍການດັ່ງກ່າວແມ່ນຍັງບໍ່ໄດ້ຜ່ານການກວດກາຈາກອົງການກວດສອບແຫ່ງລັດເທື່ອ

## 3.2.2 ໃບລາຍງານກະແສເງິນສົດ ຮ່ວງເງິນລາຍຮັບວິຊາການ ປະຈໍາປີ 2020

| | ປະຈໍາປີ 2020 | ປະຈໍາປີ 2019 |
|---|---|---|
| **ລາຍຮັບ** | | |
| ລາຍຮັບຈາກດອກເບ້ຍເງິນໃຫ້ກູ້ຢືມ | 2.911.259.629 | 4.498.223.054 |
| ລາຍຮັບຕົ້ນທຶນເງິນໃຫ້ກູ້ຢືມ | 6.482.400.000 | 200.000.000 |
| ລາຍຮັບ ອື່ນໆ | 894.556.000 | 41.710.000 |
| ລາຍການຮັບເງິນ ຈາກຄັງເງິນແຫ່ງຊາດ (2) | 9.072.035.396 | 5.439.070.307 |
| **ລວມຍອດລາຍຮັບທັງໝົດ** | **19.360.251.025** | **10.179.003.361** |
| **ລາຍຈ່າຍ** | | |
| ລາຍຈ່າຍບໍລິຫານປົກກະຕິອື່ນໆ | 428.749.900 | 537.309.572 |
| ລາຍຈ່າຍໂຄງການສະໜອງສິນເຊື່ອໃຫ້ ວນກ ຜ່ານ ທະນາຄານທຸລະກິດ ແລະ ສະຖາບັນການເງິນ | 3.000.000.000 | – |
| ລາຍຈ່າຍໂຄງການສົ່ງເສີມວິຊາການ | 48.532.000 | 233.856.000 |
| ລາຍຈ່າຍຊໍາລະໜີ້ດອກເບ້ຍເງິນກູ້ຢືມໃຫ້ກະຊວງການເງິນ | 1.495.796.496 | 2.462.086.735 |
| ລາຍຈ່າຍເງິນບ້ວງປີເກົ່າ | 4.174.476.000 | 2.117.433.000 |
| ລາຍຈ່າຍມອບເງິນເຂົ້າງົບປະມານແຫ່ງລັດ | 11.165.688.496 | 7.412.340.000 |
| **ລວມຍອດລາຍຈ່າຍທັງໝົດ** | **20.313.242.892** | **12.763.025.307** |
| **ລາຍຮັບ/ລາຍຈ່າຍ ສຸດທິ** | **(952.991.867)** | **(2.584.021.946)** |
| ຍອດເຫຼືອເງິນສົດໃນຄັງ/ເງິນຝາກ ຕົ້ນສະໄໝ | 1.380.819.608 | 3.964.841.554 |
| ຍອດເຫຼືອເງິນສົດໃນຄັງ/ເງິນຝາກ ທ້າຍສະໄໝ | 427.827.741 | 1.380.819.608 |

**ໝາຍເຫດ:**

(2) ລາຍການຮັບເງິນຈາກຄັງເງິນແຫ່ງຊາດ ໝາຍເຖິງລາຍຈ່າຍງົບປະມານທີ່ປະກອບເອກະສານຕາມໃບຂໍຖອນ ແລະ ໄດ້ຮັບເຫັນດີອະນຸມັດຈ່າຍຂອງຄັງເງິນ

*ບັນດາລາຍການດັ່ງກ່າວແມ່ນຍັງບໍ່ໄດ້ຜ່ານການກວດກາຈາກອົງການກວດສອບແຫ່ງລັດເທື່ອ

## 3.2.3 ໃບລາຍງານແຫຼ່ງທຶນ ແລະ ການນຳໃຊ້ທຶນ ຮ່ວງເງິນ 200 ຕື້ກີບ ປະຈຳປີ 2020

| | ປະຈຳປີ 2020 | ປະຈຳປີ 2019 |
|---|---|---|
| **ແຫຼ່ງທຶນ** | | |
| ລາຍຮັບຈາກດອກເບ້ຍເງິນໃຫ້ກູ້ຢືມ | – | – |
| ລາຍຮັບຕົ້ນທຶນເງິນໃຫ້ກູ້ຢືມ | – | – |
| ລາຍຮັບຈາກການປະກອບທຶນຂອງລັດຖະບານ | 200.000.000.000 | |
| | – | – |
| **ລວມຍອດລາຍຮັບທັງໝົດ** | **200.000.000.000** | **–** |
| **ການນຳໃຊ້ທຶນ** | | |
| ລາຍຈ່າຍບໍລິຫານປົກກະຕິອື່ນໆ | 540.873.000 | – |
| ລາຍຈ່າຍໂຄງການສະໜອງສິນເຊື່ອໃຫ້ ວນກ ຜ່ານ ທະນາຄານທຸລະກິດ ແລະ ສະຖາບັນການເງິນ | 177.000.000.000 | – |
| ລາຍຈ່າຍໂຄງການສົ່ງເສີມວິຊາການ | 144.851.000 | – |
| ລາຍຈ່າຍຄ່າຄຸ້ມຄອງທຶນ | 1.000.000.000 | – |
| **ລວມຍອດລາຍຈ່າຍທັງໝົດ** | **178.685.724.000** | **–** |
| **ລາຍຮັບ/ລາຍຈ່າຍ ສຸດທິ** | **21.314.276.000** | **–** |
| ຍອດເຫຼືອເງິນສົດໃນຄັງ/ເງິນຝາກ ຕົ້ນສະໃໝ | – | – |
| ຍອດເຫຼືອເງິນເງິນຝາກ ທ້າຍສະໄໝ | 21.026.515.500 | – |
| ຍອດເຫຼືອເງິນສົດໃນຄັງ ທ້າຍສະໄໝ | 8.920.500 | |
| ເງິນລໍຖ້າສະສາງ | 278.840.000 | |

**ໝາຍເຫດ:**

*ບັນດາລາຍການດັ່ງກ່າວແມ່ນຍັງບໍ່ໄດ້ຜ່ານການກວດກາຈາກອົງການກວດສອບແຫ່ງລັດເທື່ອ

# ພາກທີ IV

# ກິດຈະກຳ ການເຄື່ອນໄຫວ ຂອງ ທສວ



# ພິທີເຊັນສັນຍາ

ພິທີເຊັນສັນຍາສະໜອງທຶນບ້ວງ 200 ຕື້ກີບ ຄັ້ງທີ 1 ລະຫວ່າງ ທສວ ແລະ ທະນາຄານ ພັດທະນາລາວ, ທະນາຄານຮ່ວມທຸລະກິດລາວຫວຽດ, ທະນາຄານໄຊ່ງ່ອນເທືອງຕິ່ນລາວ ແລະ ທະນາຄານມາຣູຮານ ເຈແປນ ລາວ




ພິທີເຊັນສັນຍາສະໜອງທຶນບ້ວງ 200 ຕື້ກີບ ຄັ້ງທີ 2 ລະຫວ່າງ ທສວ ແລະ ທະນາຄານ ພັດທະນາລາວ, ທະນາຄານຮ່ວມທຸລະກິດລາວຫວຽດ, ທະນາຄານໄຊ່ງ່ອນເທືອງຕິ່ນລາວ ແລະ ທະນາຄານມາຣູຮານ ເຈແປນ ລາວ



ພິທີເຊັນສັນຍາເງິນກູ້ ໂຄງການເຂົ້າເຖິງແຫຼ່ງທຶນຂອງ ວນກ ເພື່ອຮັບມືກັບຜົນກະທົບ ແລະ ຟື້ນຟູ ຈາກໂຄວິດ-19 (MSMEA2F- ESR) ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ທະນາຄານໂລກ



ພິທີເຊັນສັນຍາສະໜອງທຶນລະຫວ່າງ ທສວ ແລະ 4 ສະຖາບັນການເງິນ ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນປະຕູຄຳ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນເມັກ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ (BDP) ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນໄຊອຸດົມ



## ພິທີເຊັນສັນຍາສະໜອງທຶນ ລະຫວ່າງ ທສວ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ




## ກອງປະຊຸມ

### ກອງປະຊຸມສະພາບໍລິຫານ ຄັ້ງທີ 2 ແລະ ຄັ້ງທີ 3





## ກອງປະຊຸມສະພາບໍລິຫານ ຄັ້ງທີ 4 ແລະ ຄັ້ງທີ 5






## ກອງປະຊຸມປະກອບຄໍາເຫັນຕໍ່ກັບໂຄງການສະໜອງທຶນໃຫ້ແກ່ສະຖາບັນການເງິນຈຸລະວິສາຫະກິດ





## ກອງປະຊຸມຄະນະກໍາມະການທົບທວນການຈັດຕັ້ງປະຕິບັດໂຄງການບ້ອງເງິນກູ້ຢືມຈາກທະນາຄານໂລກ ແລະ ຊ່ວຍເຫຼືອລ້າ



## ກອງປະຊຸມເຜີຍແຜ່ດຳລັດ 299/ລບ ໃຫ້ 8 ແຂວງ ພາກເໜືອ





## ກອງປະຊຸມເຜີຍແຜ່ດຳລັດ 299/ລບ ໃຫ້ 6 ແຂວງ ພາກກາງ







## ກອງປະຊຸມເຜີຍແຜ່ດຳລັດ 299/ລບ ໃຫ້ 4 ແຂວງ ພາກໃຕ້






## ກິດຈະກຳລົງຕິດຕາມ ວນກ ທີ່ໄດ້ຮັບສິນເຊື່ອ ຂອງ ທສວ

### ວິສາຫະກິດສ່ວນບຸກຄົນ ມີໄຊພັດທະນາ ຟາມ ທີ່ຢູ່ ບ້ານພ້າວ, ເມືອງປາກງື່ມ, ແຂວງນະຄອນຫຼວງວຽງຈັນ





### ຟາມ ພາຈະເລີນ ທີ່ຢູ່ ບ້ານນາຄູນນ້ອຍ, ເມືອງນາຊາຍທອງ, ແຂວງນະຄອນຫຼວງວຽງຈັນ





## ບໍລິສັດເມືອງລາວສະໜອງສະບຽງອາຫານ ທີ່ຢູ່ ບ້ານໂພນຕ້ອງຈອມມະນີ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ





## ວິສາຫະກິດສ່ວນບຸກຄົນໂຮງງານຜະລິດກະແລ້ມ ບ້ານບ້ານ ທີ່ຢູ່ ບ້ານດອນໜູນ, ເມືອງໄຊທານີ, ແຂວງນະຄອນຫຼວງ ວຽງຈັນ





## ບໍລິສັດ ບີເຄເອັນ ຈຳກັດ ທີ່ຢູ່ ບ້ານສະພັງຄະນິງ, ເມືອງໄຊເສດຖາ, ແຂວງນະຄອນຫຼວງວຽງຈັນ





## ໂຮງຊ່າງ ຫັດຖະກຳກອງແຊງ ທີ່ຢູ່ ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ແຂວງນະຄອນຫຼວງວຽງຈັນ





## ສະຫະກອນກາເຟຈິງໃຈ ທີ່ຢູ່ ບ້ານຫຼັກ 5, ເມືອງປາກຊ່ອງ, ແຂວງຈຳປາສັກ





## ສວນອາຫານຈຳປີບາຈຽງ ບ້ານໜອງກອກ, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ





## ບໍລິສັດ MC ຟາມ ທີ່ຢູ່ ບ້ານ ພູມ່ວງ, ເມືອງປາກເຊ, ແຂວງຈຳປາສັກ





## ລ້ຽງປາກະຊັງສ່ວນບຸກຄົນ ທ່ານ ຄຳພູນ ທີ່ຢູ່ບ້ານໂນນສະຫວ່າງ, ເມືອງປາກເຊ, ແຂວງຈຳປາສັກ





## ສະຫະກອນຕ່ຳສິ້ນຜືນແພໄໝບ້ານສະຜ່າຍ ທີ່ຢູ່ ບ້ານສະຜ່າຍ, ເມືອງຈຳປາສັກ, ແຂວງຈຳປາສັກ







## ວິສາຫະກິດສ່ວນບຸກຄົນ ເພັດປັນຍາຟາມ ທີ່ຢູ່ ບ້ານໜອງບົວ, ເມືອງຫຼາ, ແຂວງອຸດົມໄຊ



